ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ

ສໍານັກງານປົກຄອງແຂວງ

ເລກທີ 02 /ຈຂ.ຊຂ

ວັນທີ 17/01/ 2017

## ຄໍາສັ່ງແນະນໍາ

## ຂອງເຈົ້າແຂວງ ແຂວງຊຽງຂວາງ

**ເຖິງ** : ບັນດາພະນັກງານ, ທະຫານ, ຕໍາຫລວດ, ບໍານານ, ປະຊາຊົນບັນດາເຜົ່າ ຕະຫລອດເຖິງ ອົງການຈັດຕັ້ງບຸກຄົນ - ນິຕິບຸກຄົນ ທຸກພາກສ່ວນທັງພາຍໃນ ແລະ ຕ່າງແຂວງ.

**ເລື່ອງ** : ຫ້າມເຂົ້າໄປທໍາການຜະລິດຢູ່ພື້ນທີ່ສະຫງວນຂອງລັດບໍລິເວນພູ 106, ຂົວປ່ອງ, ຫ້ວຍສະຫລຽວ ເມືອງຜາໄຊ ແຂວງຊຽງຂວາງ.

- ອີງຕາມຂໍ້ຕົກລົງຂອງ ຄະນະກໍາມະການ ປກຊ-ປກສ ເລກທີ 25/ຄນ.ປຊ-ປສ ຊຽງຂວາງວັນທີ 25/5/2016 ວ່າດ້ວຍການກໍານົດພື້ນທີ່ຫວງຫ້າມ (ເຂດຂາວ ) ເຂດຍຸດທະສາດ ປກຊ- ປກສ ແຂວງຊຽງຂວາງ.
- ອີງຕາມຂໍ້ຕົກລົງຂອງທ່ານເຈົ້າແຂວງຊຽງຂວາງສະບັບເລກທີ 03/ຈຂ.ຊຂ ລົງວັນທີ 5/1/2017 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນໍາການຈັດສັນທີ່ຢູ່ອາໄສໃຫ້ແກ່ປະຊາຊົນ 96 ຄອບຄົວຢູ່ເມືອງຜາໄຊ.
- ອີງຕາມກອງປະຊຸມຄະນະຮັບຜິດຊອບຊີ້ນໍາການຈັດສັນທີ່ຢູ່ອາໄສໃຫ້ແກ່ປະຊາຊົນ ທີ່ສ່ອງແສງລາຍງານວຽກງານຈັດສັນທີ່ຢູ່ອາໄສ ໃນຄັ້ງວັນທີ 16 ມັງກອນ 2017.

**ເຈົ້າແຂວງງ ຊຽງຂວາງ ອອກຄໍາສັ່ງແນະນໍາດັ່ງນີ້:**

1. ຫ້າມບໍ່ໃຫ້ບຸກຄົນ, ນິຕິບຸກຄົນເຂົ້າໄປທໍາການຜະລິດເຮັດໄຮ່, ລ້ຽງສັດ ແລະ ຕັດໄມ້ທໍາລາຍປ່າໃນເຂດພື້ນທີ່ສະຫງວນຂອງລັດບໍລິເວນ ພູ 106 - ຂົວປ່ອງ - ຫ້ວຍສະຫລຽວ ຢ່າງເດັດຂາດ ລວ່ມເຖິງພາກສ່ວນປະຊາຊົນ ທີ່ເຄີຍເຂົ້າໄປທໍາການຜະລິດໄລຍະຜ່ານມາ.

2. ມອບໃຫ້ຄະນະທີ່ໄດ້ຮັບການແຕ່ງຕັ້ງ ສົມທົບກັບອໍານາດການປົກຄອງເມືອງຜາໄຊ ແລະ ພາກສ່ວນທີ່ກ່ຽວຂ້ອງ ລົງເກັບກໍາສະຖິຕິພາກສ່ວນທີ່ຈະຮັບການຈັດສັນຕາມທິດຂອງແຂວງ ໂດຍສະເພາະ 96 ຄອບຄົວທີ່ກໍາລັງລະເມີດຖາງປ່າເຮັດໄຮ່ຊະຊາຍຢູ່ບໍລິເວນພູ 106 - ຂົວປ່ອງ - ຫ້ວຍສະຫລຽວ ໃນຊຸມປີຜ່ານມາ ໃຫ້ຈັດສັນໄປຢູ່ຈຸດ ພູຫອມ, ຈຸດນໍ້າເຊ້ຍ ເມືອງຜາໄຊ ເພື່ອສະຫງວນດິນ, ປ່າໄມ້ ບໍລິເວນດັ່ງກ່າວ ໃຫ້ກາຍເປັນປ່າປ້ອງກັນ - ປ່າສະຫງວນ, ແຫລ່ງທ່ອງທ່ຽວທໍາມະຊາດ, ການພັດທະນາໄຟຟ້ານໍ້າຕົກ ຕິດພັນກັບວຽກງານຍຸດທະສາດປ້ອງກັນຊາດ - ປ້ອງກັນຄວາມສະຫງົບ.

3. ບັນດານິຕິກໍາຕ່າງໆເຊັ່ນ: ເອກະສານຢັ້ງຢືນການນໍາໃຊ້ພື້ນທີ່ເຂດສະຫງວນຂອງລັດທີ່ກ່າວມາຂ້າງເທິງ ໃນໄລຍະຜ່ານມາທີ່ຂັດກັບຄໍາສັ່ງແນະນໍາສະບັບນີ້ລ້ວນແຕ່ຖືກລົບລ້າງ.

ດັ່ງນັ້ນ, ຈຶ່ງໄດ້ອອກຄໍາສັ່ງແນະນໍາສະບັບນີ້ເຖິງທຸກໆພາກສ່ວນເພື່ອພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຊັນແທນ ເຈົ້າແຂວງ ແຂວງຊຽງຂວາງ.

ຮອງເຈົ້າແຂວງ

ຄໍາແສນ ມະນີວົງ

Khamsene MANIVONG